**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ

ແກ້ໄຂການລະບາດຂອງພະຍາດໂຄວິດ-19

ເລກທີ 0815/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 02 ກັນຍາ 2021

# ແຈ້ງການ

**ເຖິງ:** - ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ທ່ານຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.
- ທ່ານຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນ ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການວ່າດ້ວຍການສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດ ຂອງພະຍາດໂຄວິດ-19 ໃນໄລຍະວັນທີ 01-15 ກັນຍາ 2021 ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ເຜີຍແຜ່ ແລະ ເພີ່ມທະວີການປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມ ຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການວ່າດ້ວຍການ ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃນໄລຍະວັນທີ 01-15 ກັນຍາ 2021 ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021 ແລະ ແຈ້ງການທີ່ຄະນະສະເພາະກິດ ວາງອອກ ຢ່າງເຂັ້ມງວດ.

2. ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ ສາມາດດຳເນີນກິດຈະການໄດ້ ແຕ່ ຕ້ອງປະຕິບັດຕາມມາດຕະການ ທີ່ຄະນະສະເພາະກິດຂັ້ນສູນກາງວາງອອກຢ່າງເຂັ້ມງວດ ແລະ ຮອບດ້ານ ດັ່ງນີ້:

2.1 ສ້າງແຜນກຳນົດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 ຢູ່ໃນໂຮງງານ, ຈັດຕັ້ງປະຕິບັດ ແລະ ລາຍງານຂະແໜງອຸດສາຫະກຳ ແລະ ການຄ້າ ເປັນປະຈຳ;

2.2 ພະນັກງານ-ກຳມະກອນທຸກຄົນ ຕ້ອງໄດ້ຮັບວັກຊີນ ຄົບໂດດສ໌ ຈຶ່ງອະນຸຍາດໃຫ້ເຮັດວຽກໃນໂຮງງານໄດ້;

2.3 ຫ້າມນຳໃຊ້ພະນັກງານ-ກຳມະກອນ ທີ່ມາຈາກບ້ານແດງ (ເຂດແດງ) ເດັດຂາດ. ສຳລັບໂຮງງານໃດ ທີ່ມີ ເງື່ອນໄຂ ກໍໃຫ້ຈັດສັນສະຖານທີ່ພັກຢູ່ກັບທີ່ໃຫ້ພະນັກງານ-ກຳມະກອນຂອງຕົນ ເພື່ອຫຼຸດຜ່ອນຄວາມສ່ຽງ ໃນການແຜ່ເຊື້ອຢູ່ໃນໂຮງງານ;

2.4 ຕ້ອງກວດວັດແທກອຸນຫະພູມ, ກໍລະນີພົບເຫັນຜູ້ມີອາການໄຂ້ (ອຸນຫະພູມຮ່າງກາຍສູງກວ່າ 37,5 ອົງສາ ເຊ) ຫຼື ມີອາການສົງໄສວ່າເປັນພະຍາດໂຄວິດ-19 ຕ້ອງສົ່ງເຂົ້າຫ້ອງແຍກປ່ຽວຂອງໂຮງງານ ແລ້ວໂທປຶກສາສາຍດ່ວນ 165, 166 ແລະ ພົວພັນໃຫ້ແພດໝໍເຂົ້າກວດທັນທີ;

2.5 ໃຫ້ສືບຕໍ່ປະຕິບັດມາດຕະການຮັກສາໄລຍະຫ່າງຂອງການເຮັດວຽກ ເພື່ອຫຼຸດຄວາມແອອັດຢູ່ໃນສະຖານທີ່ເຮັດວຽກ, ຫ້ອງອາຫານ ແລະ ບ່ອນພັກເຊົາຂອງໂຮງງານ. ໝາຍສັນຍາລັກເພື່ອກໍານົດການຮັກສາໄລຍະຫ່າງ, ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ 1 ແມັດໄດ້ ຕ້ອງມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນ;

2.6 ຕ້ອງໃສ່ຜ້າປິດປາກ-ດັງ ທຸກຄັ້ງ ໃນເວລາຢູ່ສະຖານທີ່ເຮັດວຽກ ແລະ ສະຖານທີ່ທີ່ມີຄົນຈໍານວນຫຼາຍ;

2.7 ຕ້ອງມີນໍ້າດື່ມສະອາດ, ມີບ່ອນລ້າງມືດ້ວຍນໍ້າສະອາດ ໃສ່ສະບູ ຫຼື ເຈວລ້າງມື ຖືກຕາມຫຼັກການອະນາໄມ;

2.8 ໃຫ້ອະນາໄມ ແລະ ຂ້າເຊື້ອ ອຸປະກອນ, ສິ່ງຂອງທີ່ມີການສໍາຜັດເລື້ອຍໆ ແລະ ສະຖານທີ່ພາຍໃນໂຮງງານ;

2.9 ຫ້າມຈັດງານລ້ຽງສັງສັນ ຫຼື ຊຸມແຊວ ຫຼື ກິດຈະກໍາອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອທຸກຮູບແບບ;

2.10 ກໍລະນີ ມີພະນັກງານຕິດເຊື້ອໃນໂຮງງານ ໃຫ້ຮີບຮ້ອນແຈ້ງຄະນະສະເພາະກິດ ຂັ້ນສູນກາງ ຫຼື ທ້ອງຖິ່ນ ສາຍດ່ວນ 165, 166 ເພື່ອດໍາເນີນການກວດສອບ, ປະເມີນ ແລະ ໃຫ້ຄໍາແນະນໍາໃນການປະຕິບັດຕາມຫຼັກວິຊາການທີ່ຄະນະສະເພາະກິດວາງອອກ.

3. ໂຮງງານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ທີ່ຕັ້ງຢູ່ໃນເຂດແດງ ສາມາດດໍາເນີນກິດຈະການໄດ້ ໂດຍປະຕິບັດຕາມມາດຕະການປ້ອງກັນທີ່ຄະນະສະເພາະກິດວາງອອກ ຢ່າງເຂັ້ມງວດ ແລະ ໃຫ້ນໍາໃຊ້ພະນັກງານ ແລະ ກໍາມະກອນ ຢູ່ຫໍພັກພາຍໃນໂຮງງານຂອງຕົນເທົ່ານັ້ນ. ສໍາລັບການເຂົ້າ-ອອກຂອງພະນັກງານ-ກໍາມະກອນ ແລະ ການຂົນສົ່ງວັດຖຸດິບ, ອຸປະກອນ, ຜະລິດຕະພັນຂອງໂຮງງານ ໃຫ້ປະຕິບັດຕາມມາດຕະການ ທີ່ໄດ້ລະບຸໄວ້ໃນ ຂໍ້ 1.6 ຂອງແຈ້ງການ ສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021.

4. ໂຮງງານທີ່ມີຄວາມຈໍາເປັນນໍາເຂົ້າຜູ້ບໍລິຫານ, ຊ່ຽວຊານ ຫຼື ວິຊາການ ໃຫ້ສະເໜີຫາຄະນະສະເພາະກິດຂັ້ນສູນກາງ ຕາມຄໍາແນະນໍາສະບັບເລກທີ 01444/ຕປທ.ສພກ, ລົງວັນທີ 01 ມິຖຸນາ 2020 ແລະ ມາດຕະການທີ່ຄະນະສະເພາະກິດວາງອອກ.

5. ສໍາລັບແຂວງໃດທີ່ມີການຈັດລະດັບຄວາມຮ້າຍແຮງຂອງການລະບາດສູງຂຶ້ນ ໃຫ້ປະຕິບັດຕາມມາດຕະການທີ່ຄະນະສະເພາະກິດ ຂັ້ນແຂວງ ຫຼື ນະຄອນຫຼວງ ວາງອອກຕາມແຕ່ລະໄລຍະ.

6. ໃຫ້ກົມອຸດສາຫະກໍາ ແລະ ຫັດຖະກໍາ, ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ເຜີຍແຜ່, ແນະນໍາ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

7. ໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ແລ້ວສົ່ງມາຍັງກົມອຸດສາຫະກໍາ ແລະ ຫັດຖະກໍາ ພາຍໃນວັນທີ 14 ກັນຍາ 2021 ເພື່ອສືບຕໍ່ລາຍງານກະຊວງ ແລະ ລັດຖະບານ ພິຈາລະນາຄົ້ນຄວ້າແຜນສືບຕໍ່ມາດຕະການທີ່ຈໍາເປັນໃຫ້ທັນເວລາ.

8. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດ**

ສົມຈິດ ອິນທະມິດ